# ຊົມເຊີຍ

## ລາງວັນດີເດັ່ນທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮັບຈາກວາລະສານຊັ້ນນຳຈາກຕ່າງປະເທດ




ລາງວັນດີເດັ່ນດ້ານແນວຄິດລິເລີ່ມ ເພື່ອການເຂົ້າເຖິງບໍລິການດ້ານການເງິນຢ່າງທົ່ວເຖິງ ແຫ່ງປີ
(Financial Inclusion initiative of the Year – Laos)




ດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການຜ່ານລະບົບມືຖື ແຫ່ງປີ
(Mobile Banking Initiative of the Year – Laos)

ວາລະສານການທະນາຄານແລະການເງິນອາຊີ (Asian Banking and Finance Magazine) ມອບ 2 ລາງວັນດີເດັ່ນໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນງານປະກາດລາງວັນດ້ານການທະນາຄານ ແລະ ການເງິນອາຊີ ປະຈຳປີ 2018 (Asian Banking & Finance Awards 2018) ທີ່ຈັດຂຶ້ນໃນຄ່ຳຄືນຂອງວັນທີ 12 ກໍລະກົດ 2018 ຢູ່ທີ່ປະເທດສິງກະໂປ. ລາງວັນທີ່ ທຄຕລ ໄດ້ຮັບແມ່ນ ມາຈາກຂະແໜງທະນາຄານບໍລິການລູກຄ້າທົ່ວໄປ ຫຼື Retail Banking Awards 2018 ເຊິ່ງລາງວັນອັນຊົງກຽດທີ່ ທຄຕລ ໄດ້ຮັບໃນປີນີ້ມີຄື:

### ❶ ລາງວັນດີເດັ່ນດ້ານແນວຄິດລິເລີ່ມ ເພື່ອການເຂົ້າເຖິງບໍລິການດ້ານການເງິນຢ່າງທົ່ວເຖິງ ແຫ່ງປີ (ຫຼື FINANCIAL INCLUSION INITIATIVE OF THE YEAR – LAOS)

*ລາງວັນດັ່ງກ່າວໄດ້ຈາກການສະເໜີຜະລິດຕະພັນບໍລິການເງິນດ່ວນຊຸມຊົນ (ຫຼື BCOME) ເຂົ້າຮ່ວມຊິງລາງວັນ ເນື່ອງຈາກຜະລິດຕະພັນ BCOME ແມ່ນໃຫ້ບໍລິການໂອນ-ຮັບເງິນພາຍໃນປະທດທີ່ງ່າຍດາຍທີ່ສຸດ, ທີ່ມີຄວາມທັນສະໄໝ, ສະດວກ ແລະ ວ່ອງໄວ ດ້ວຍການໂອນ-ຮັບເງິນຜ່ານຕົວແທນ BCOME ທີ່ມີຢູ່ໃນແຕ່ລະຊຸມຊົນ. ການບໍລິການນີ້ຊ່ວຍໃຫ້ລູກຄ້າຜູ້ທີ່ອາໄສຢູ່ເຂດຊົນນະບົດ ແລະ ຫ່າງຈາກຕົວເມືອງ ຫຼື ຫ່າງຈາກຈຸດບໍລິການຂອງ ທຄຕລ ສາມາດໃຊ້ບໍລິການໂອນເງິນ-ຮັບເງິນໄດ້ທັງໃນ ແລະ ນອກໂມງລັດຖະການ (ອີງຕາມເວລາເປີດຮ້ານຂອງຕົວແທນ). ບໍລິການເງິນດ່ວນຊຸມຊົນ BCOME ຍັງຊ່ວຍປະຢັດເວລາ ແລະ ຄ່າໃຊ້ຈ່າຍໃນການເດີນທາງຂອງລູກຄ້ານຳອີກ. ບໍລິການ BCOME ໄດ້ເລີ່ມໃຫ້ບໍລິການ ໃນກາງປີ 2015, ເລີ່ມຈາກ 11 ຕົວແທນ, ການບໍລິການດັ່ງກ່າວແມ່ນໄດ້ຮັບການຕອບຮັບຈາກລູກຄ້າຢ່າງຫຼວງຫຼາຍ ເຮັດໃຫ້ຈຳນວນຕົວແທນເພີ່ມຂຶ້ນຢ່າງວ່ອງໄວ, ປະຈຸບັນນີ້, ທົ່ວປະເທດມີຕົວແທນ BCOME ຫຼາຍກວ່າ 200 ຕົວແທນ. ຈາກການຕອບຮັບທີ່ດີນີ້, ທຄຕລ ໄດ້ສືບຕໍ່ພັດທະນາເພີ່ມຄວາມສາມາດ ໃຫ້ BCOME ສາມາດໃຫ້ບໍລິການໄດ້ຫຼາກຫຼາຍຂຶ້ນຕື່ມ, ເຊິ່ງ ທຄຕລ ຈະເປີດໃຫ້ບໍລິການ BCOME Version.2 ອອກສູ່ສັງຄົມໃນອານາຄົດອັນມໍ່ໆນີ້.*

### ❷ ດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການຜ່ານລະບົບມືຖື ແຫ່ງປີ (ຫຼື MOBILE BANKING INITIATIVE OF THE YEAR – LAOS)

*ລາງວັນດັ່ງກ່າວໄດ້ຈາກການສະເໜີຜະລິດຕະພັນ BCEL One (Function OnePay) ເຂົ້າຮ່ວມຊິງລາງວັນ ເນື່ອງຈາກເປັນບໍລິການທີ່ມີຄວາມທັນສະໄໝໃນການໃຫ້ບໍລິການທາງດ້ານການເງິນໃນຍຸກສັງຄົມດິຈິຕ໋ອນ. OnePay ແມ່ນລະບົບການ ຊຳລະສະສາງຜ່ານລະຫັດ QR Code Payment, ທີ່ມີຄວາມສະດວກ ແລະ ຊ່ວຍໃນການຊຳລະສະສາງຄ່າສິນຄ້າ ແລະ ບໍລິການຜ່ານ BCEL One Application. ລູກຄ້າທີ່ນຳໃຊ້ BCEL One ສາມາດຊຳລະສະສາງ ດ້ວຍວິທີການງ່າຍໆ ໂດຍສະແກນ QR Code ຂອງຮ້ານຄ້າ ແລະ ສາມາດເຮັດບໍລິການຊຳລະໄດ້ທັນທີ. ບໍລິການ OnePay ຂອງ ທຄຕລ ຖືໄດ້ວ່າ ເປັນບໍລິການທີ່ທັນຍຸກ, ທັນສະໄໝ ແລະ ເປັນທີ່ຍອມຮັບຂອງສັງຄົມຢ່າງວ່ອງໄວ, ໃນເດືອນ 12/2017 ມີຈຳນວນຮ້ານຄ້າ ທີ່ເຂົ້າຮ່ວມພຽງ 438 ຮ້ານ, ຮອດທ້າຍເດືອນ 4/2018 ຈຳນວນຮ້ານເພີ່ມຂຶ້ນເປັນ 2,256ຮ້ານ.*

ທັງສອງລາງວັນດັ່ງກ່າວນີ້, ທຄຕລ ເປັນທະນາຄານພຽງແຫ່ງດຽວໃນ ສປປ ລາວ ທີ່ໄດ້ຮັບລາງວັນອັນຊົງກຽດດັ່ງກ່າວ. ລາງວັນທີ່ ທຄຕລ ໄດ້ຮັບໃນເທື່ອນີ້ເປັນສິ່ງທີ່ຢັ້ງຢືນເຖິງຄຸນນະພາບໃນການບໍລິການຂອງ ທຄຕລ ແລະ ການຍອມຮັບຂອງສາກົນຕໍ່ ທຄຕລ ໄດ້ເປັນຢ່າງດີ. ການສະເໜີຊື່ທະນາຄານເພື່ອເຂົ້າຮັບລາງວັນ ແລະ ການຕັດສິນ ແມ່ນພິຈາລະນາໂດຍຄະນະກຳມະການ ທີ່ມາຈາກບັນດາບໍລິສັດກວດສອບບັນຊີທີ່ມີຊື່ສຽງລະດັບສາກົນ ປະກອບດ້ວຍຕົວແທນຈາກ: ບໍລິສັດ Ernst & Young, Deloitte, KPMG ແລະ PwC. ບັນຍາກາດການຈັດງານໄດ້ຈັດຂຶ້ນໃນບັນຍາກາດທີ່ບົດຟົດຟື້ນ, ມີແຂກຜູ້ຊົງກຽດເຂົ້າຮ່ວມຫຼາຍກວ່າ 330 ທ່ານ ທີ່ມາຈາກ 200 ທະນາຄານ ແລະ ສະຖາບັນການເງິນ ຈາກ 40 ປະເທດ. ໃນປີ 2018.







**ທ່ານ ບັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ສົມຈັນ ວິສີສົມບັດ, ຫົວໜ້າພະແນກການຕະຫຼາດ,**
ຕາງໜ້າ ທຄຕລ ເຂົ້າຮ່ວມຮັບລາງວັນອັນຊົງກຽດດັ່ງກ່າວ ຈາກທ່ານ Tim Charlton, ສຳນັກພິມວາລະສານການທະນາຄານ&ການເງິນອາຊີ